# ຈົດໝາຍຂ່າວ

ເດືອນກັນຍາ 2022
ສະບັບ #3

ຈົດໝາຍຂ່າວປະຈຳໄຕມາດ ສຳລັບການຄົ້ນຄວ້າທາງ ດ້ານໂພຊະນາການ ຢູ່ ສປປລາວ

**ສາລະບານ**

—

**ປະຫວັດຂອງນັກຄົ້ນຄວ້າ**

—

**ການເຜີຍແຜ່ການສຶກສາໃໝ່ ດ້ານໂພຊະນາການຂອງລາວ**

—

**ໂອກາດຂອງການຮຽນຮູ້ ໃນການອອກແບບການຄົ້ນຄວ້າ**



# ການປັບປຸງ ການວັດແທກຮ່າງກາຍ

ພາຍຫຼັງສຳເລັດການປັບປຸງບົດຮຽນກ່ຽວກັບການວັດແທກຮ່າງກາຍ ແລະ ການຜະລິດວິດີໂອ ເພື່ອໃຊ້ຝຶກອົບຮົມໃນການປະເມີນທາງດ້ານໂພຊະນາການຂອງເດັກອ່ອນ ແລະ ເດັກນ້ອຍ ແມ່ນໄດ້ມີການລິເລີ່ມການຝຶກອົບຮົມໂດຍການນຳໃຊ້ບົດຮຽນການວັດແທກຮ່າງກາຍ.

ສູນໂພຊະນາການແມ່ນເປັນຜູ້ນຳລະດັບປະເທດ ກ່ຽວກັບມາດຕະຖານການວັດແທກຮ່າງກາຍ ເຊິ່ງໄດ້ນຳພາຈັດຕັ້ງປະຕິບັດການຝຶກອົບຮົມຄູຝຶກໃນນະຄອນຫຼວງວຽງຈັນທີ່ ກວມເອົາພະນັກງານຂອງສູນ ແລະ ແພດຈາກ ໂຮງໝໍສູນກາງ. ຄູຝຶກເຫຼົ່ານີ້ຈະໄດ້ໄປຝຶກອົບຮົມໃຫ້ ພະແນກສາທາລະນະສຸກ, ສະຖານບໍລິການ ແລະ ທີມງານການຄົ້ນຄວ້າເພື່ອຮັບປະກັນໃນການປະຕິບັດການວັດ ແທກຮ່າງກາຍໃຫ້ຖືກຕ້ອງ ແລະ ໄດ້ຮັບຂໍ້ມູນທີ່ມີຄຸນນະພາບສູງ. ໃນວັນທີ 18-19 ກໍລະກົດ, ໂຄງການ ANRCB ໄດ້ສະໜັບສະໜູນໃຫ້ສູນໂພຊະນາການຝຶກອົບຮົມໃຫ້ຄູຝຶກຈຳນວນ 20 ທ່ານ ພ້ອມທັງສະໜອງເຄື່ອງມືການສິດສອນ ເຊິ່ງປະກອບມີ ບົດນຳສະເໜີ, ຄູ່ມື, ບົດທົດສອບ, ແລະ ບັນດາວິດີໂອ. ຕໍ່ມາ, ໃນວັນທີ 21 ກໍລະກົດ ໄດ້ມີການຝຶກອົບຮົມໃຫ້ແກ່ ຄະນະພາກວິຊາ ແລະ ນັກສຶກສາທີ່ກ່ຽວຂ້ອງຈາກມະຫາວິທະຍາໄລວິທະຍາສາດສຸຂະພາບ ແລະ ສະຖາບັນສາທາ ລະນະສຸກສາດ ແລະ ການແພດເຂດຮ້ອນທີ່ມີແຜນຈະເຮັດການຄົ້ນຄວ້າທີ່ກ່ຽວຂ້ອງກັບການວັດແທກຮ່າງກາຍໃນບົດຄົ້ນຄວ້າຂອງເຂົາເຈົ້າ. ໂຄງການ ANRCB ຈະເຮັດວຽກຮ່ວມກັບຄະນະພາກວິຊາຂອງມະຫາວິທະຍາໄລວິທະຍາສາດສຸຂະພາບເພື່ອນຳໃຊ້ບົດຮຽນດັ່ງກ່າວເຂົ້າສິດສອນຢູ່ມະຫາວິທະຍາໄລແນ່ໃສ່ຮັບປະກັນ ມາດຕະຖານ ແລະ ເຕັກນິກ. ບັນດາວິດີໂອການວັດແທກ ຮ່າງກາຍແມ່ນເຜີຍແຜ່ໃນຊ່ອງ YouTube ຂອງໂຄງການ. https://bit.ly/3P6dV4V

ທຸກພາກສ່ວນທີ່ສົນໃຈກ່ຽວກັບການຝຶກອົບຮົມດ້ານການວັດແທກຮ່າງກາຍສາມາດພົວພັນກັບສູນໂພຊະນາການ,
ຂະແໜງຝຶກອົບຮົມ ເພື່ອຂໍການສະໜັບສະໜູນດ້ານວິຊາການ ພ້ອມດ້ວຍບັນດາເຄື່ອງມືທີ່ໃຊ້ໃນການອົບຮົມ.

ຮ່ວມງານກັບ Partnering with: | ສະໜັບສະໜູນທຶນໂຄງການໂດຍ Funded by: USAID | ຈັດຕັ້ງປະຕິບັດໂຄງການໂດຍ Implemented by: CRS | ໃຫ້ການຊ່ວຍເຫຼືອທາງດ້ານວິຊາການໂດຍ Technical Support by: Purdue University, Indiana University | ຮ່ວມງານກັນເປັນເຄືອຂ່າຍ Working together as the consortium: LASER PULSE

# ປະຫວັດຂອງຜູ້ໄດ້ຮັບທຶນ

ທີມງານຄົ້ນຄວ້າຈາກ ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ແລະ ສູນໂພຊະນາການໄດ້ຮັບທຶນໃນການຄົ້ນຄວ້າ ມູນຄ່າ 5.000 ໂດລາສະຫະລັດຕໍ່ທີມ ຈາກອົງການເພື່ອການພັດທະນາສາກົນແຫ່ງສະຫະລັດອາເມລິກາ ໂດຍຜ່ານໂຄງການ ANRCB ຊຶ່ງແມ່ນສ່ວນໜຶ່ງຂອງແຜນງານການໃຫ້ຄໍາປຶກສາໄລຍະໜຶ່ງປີ ເພື່ອສົ່ງເສີມການຄົ້ນຄວ້າທາງດ້ານໂພຊະນາການທີ່ມີຄຸນນະພາບ. ແຕ່ລະທີມອອກແບບການສອບຖາມ ແລະ ຈັດຕັ້ງປະຕິບັດໂຄງການຂອງຕົນເອງຢ່າງເປັນອິດສະລະ ໂດຍໄດ້ຮັບການໃຫ້ຄໍາປຶກສາຢ່າງໃກ້ຊິດກັບອາຈານໃນສັງກັດຂອງໂຄງການ ຊຶ່ງເປັນສ່ວນໜຶ່ງຂອງເປົ້າໝາຍໃນການເພີ່ມຄຸນນະພາບ ແລະ ການນໍາໃຊ້ການຄົ້ນຄວ້າທາງດ້ານໂພຊະນາການໃນ ສປປ ລາວ. ນີ້ແມ່ນປະຫວັດຂອງສອງທ່ານທີ່ໄດ້ຮັບທຶນ.

***ທ່ານ ນາງ ດຣ. ເກດມະນີ ລາດສະວົງ, ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ***

ທ່ານ ນາງ ດຣ. ເກດມະນີ ແລະ ທີມງານນັກສຶກສາປະລິນຍາໂທຂອງເພິ່ນຈາກສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ໄດ້ຖືກຄັດເລືອກ ເພື່ອດໍາເນີນການສຶກສາໂດຍວິທີການຜ່າຕັດຂວາງ (cross-sectional study) ແລະ ບັນທຶກຂໍ້ມູນກ່ຽວກັບອາຫານທີ່ໄວໜຸ່ມມັກກິນ, ໂດຍສະເພາະໄວໜຸ່ມມັກເລືອກກິນອາຫານທີ່ດີຕໍ່ສຸຂະພາບ ຫຼື ມັກກິນອາຫານທີ່ມີເກືອແລະນໍ້າຕານສູງ. ທີມຂອງເພິ່ນມີແຜນທີ່ຈະທົດສອບແບບສອບຖາມດ້ວຍຕົນເອງຢູ່ໂຮງຮຽນກ່ອນຈະດໍາເນີນການເກັບກໍາຂໍ້ມູນທາງອອນລາຍ ຫຼື ສື່ສັງຄົມອອນລາຍ. ທ່ານ ນາງ ດຣ. ເກດມະນີ ເລືອກນະວັດຕະກໍາ ການອອກແບບການຄົ້ນຄວ້ານີ້ ເນື່ອງຈາກເພິ່ນ ຕ້ອງການນໍາໃຊ້ປະໂຫຍດຂອງສື່ສັງຄົມອອນລາຍທີ່ໄວໜຸ່ມ ມັກ ເພື່ອເຂົ້າໃຈພຶດຕິກໍາ ແລະ ຄວາມສ່ຽງຕໍ່ສຸຂະພາບ. "ສື່ສັງຄົມອອນລາຍແມ່ນແຫຼ່ງຂໍ້ມູນທີ່ພວກ ເຮົາມີ, ແລະ ທຸກຄົນຕ່າງກໍ່ໄດ້ນໍາໃຊ້. ການຄົ້ນຄວ້ານີ້ຈະສະໜອງຂໍ້ມູນທີ່ດີກ່ຽວກັບໄວໜຸ່ມວ່າເຂົາເຈົ້າກິນອາຫານແນວໃດ ແລະ ກິນຫຍັງແດ່ພ້ອມທັງການກໍານົດຄວາມມັກຂອງການກິນອາຫານທີ່ເປັນດ້ານບວກ ແລະ ລົບ." ເພິ່ນຫວັງວ່າຜົນການຄົ້ນຄວ້າຂອງເພິ່ນຈະຖືກນໍາໃຊ້ເພື່ອໃຫ້ຄວາມຮູ້ທາງດ້ານສຸຂະພາບໃນຕໍ່ໜ້າ, ລວມທັງເພີ່ມການເຂົ້າເຖິງແຫຼ່ງຂໍ້ມູນທີ່ກ່ຽວຂ້ອງກັບ ການສຶກສາທາງດ້ານໂພຊະນາການສໍາລັບໄວໜຸ່ມຢ່າງກວ້າງຂວາງ." ຄວາມເຂົ້າໃຈກ່ຽວກັບອາຫານທີ່ໄວໜຸ່ມມັກກິນຈະຊ່ວຍຄາດຄະເນຜົນໄດ້ຮັບທາງດ້ານສຸຂະພາບໃນອະນາຄົດ ແລະ ເປັນຂໍ້ມູນສໍາຄັນສໍາລັບຜູ້ພັດທະນານະໂຍບາຍ ແລະ ຍຸດທະສາດເພື່ອປ້ອງກັນ ຫຼື ຫຼຸດຜ່ອນການຂາດສານອາຫານ, ໂດຍສະເພາະບັນຫາການຂາດສານອາຫານໃນສອງຮູບແບບ ຄື ໂພຊະນາການເກີນ ແລະ ການຂາດສານອາຫານແບບບໍ່ພຽງພໍທີ່ມີຢູ່ແລ້ວໃນ ສປປ ລາວ. ທ່ານ ນາງ ດຣ. ເກດມະນີຍັງມີຄວາມຄາດຫວັງຈະດໍາເນີນການຄົ້ນຄ້ວາເພີ່ມເຕີມໃນຕໍ່ໜ້າອີກກ່ຽວກັບການເລືອກກິນອາຫານ. ເພິ່ນໄດ້ອະທິບາຍຕື່ມວ່າ "ໃນອານາຄົດ ຂ້າພະເຈົ້າ ຢາກເຮັດການຄົ້ນຄວ້າກ່ຽວກັບອາຫານທ້ອງຖິ່ນທີ່ມີສານອາຫານທີ່ຫຼາກຫຼາຍ," ໂດຍຫວັງວ່າຄວາມຮູ້ນີ້ຈະຊ່ວຍໃຫ້ພວກເຮົາປັບປຸງອາຫານການກິນຢູ່ຊຸມຊົນເຂດຊົນນະບົດ ແລະ ຍັງເປັນການອະນຸລັກອາຫານພື້ນເມືອງທີ່ມີຄວາມຫຼາກຫຼາຍຂອງຄົນລາວອີກດ້ວຍ."





***ທ່ານ ນາງ ດຣ. ສຸກສາໝອນ ທອງມີໄຊ, ຮອງຫົວໜ້າຂະແໜງສົ່ງເສີມສຸຂະພາບ ແລະ ໂພຊະນາການ, ພາກວິຊາ ສາທາລະນະສຸກສາດ, ມະຫາວິທະຍາໄລວິທະຍາສາດສຸຂະພາບ***

ການຮັບປະກັນ ການບໍລິໂພກອາຫານທີ່ມີສານອາຫານ ແລະ ຈຸລະສານອາຫານທີ່ພຽງພໍໃນເດັກອະນຸບານຍັງເປັນສິ່ງທ້າທາຍໃນ ສປປ ລາວ ແຕ່ຄວາມໜ້າ ເຊື່ອຖື ແລະ ລາຍລະອຽດຂອງຂໍ້ມູນກ່ຽວກັບການບໍລິໂພກອາຫານແມ່ນຍັງບໍ່ມີຫຼາຍ ສໍາລັບເດັກອາຍຸຕໍ່າກວ່າ 2 ປີ. ບົດຄົ້ນຄວ້າຢູ່ຂັ້ນຊຸມຊົນຂອງ ທ່ານ ນາງ ດຣ. ສຸກສາໝອນ ໄດ້ຖືກຄັດເລືອກໃນການດໍາເນີນການສໍາຫຼວດແບບຜ່າຕັດຂວາງກ່ຽວກັບການບໍລິໂພກອາຫານ ຂອງເດັກທີ່ມີ ສຸຂະພາບ ແຂງແຮງອາຍຸ 12–23 ເດືອນ ເພື່ອແກ້ໄຂບັນຫາຂໍ້ມູນທີ່ຍັງບໍ່ມີໃນບາງຈຸດ. ເພິ່ນມີແຜນທີ່ຈະໃຊ້ຄໍາຖາມໃນການສໍາພາດເພື່ອປະເມີນອາຫານທີ່ບໍລິໂພກ ແລະ ການໃຫ້ອາຫານເສີມຂອງເດັກອາຍຸນ້ອຍເຫຼົ່ານີ້ ແລະ ຄິດໄລ່ການຄາດຄະເນການບໍລິໂພກອາຫານ ດ້ວຍການນໍາໃຊ້ ຊອບແວ INMUCAL. ທ່ານ ນາງ ດຣ. ສຸກສາໝອນ ກ່າວວ່າເພິ່ນມີຄວາມຕື່ນເຕັ້ນທີ່ຈະນໍາໃຊ້ທຶນໃນການຄົ້ນຄວ້າຂະໜາດນ້ອຍນີ້ເພື່ອເສີມສ້າງທັກສະ ແລະ ປະສົບການຂອງເພິ່ນ. "ການປະເມີນສະພາບ

ໂພຊະນາການ ແລະ ການນຳໃຊ້ຊ໋ອບແວ INMUCAL ເພື່ອປະເມີນສານອາຫານທີ່ບໍລິໂພກຕາມປົກກະຕິແມ່ນສິ່ງໃໝ່ທີ່ຂ້າພະເຈົ້າສາມາດຮຽນຮູ້ ແລະ ມີແຜນທີ່ຈະສົ່ງຄວາມຮູ້ໃໝ່ຂອງຂ້າພະເຈົ້າ ໃຫ້ກັບນັກສຶກສາມະຫາວິທະຍາໄລຂອງຂ້າພະເຈົ້າ. ຂ້າພະເຈົ້າຍັງຊາບຊຶ້ງຕໍ່ກັບການສະໜັບສະໜູນຂອງໂຄງການ ໃນການຝຶກຝົນທັກສະການຂຽນບົດສະເໜີການຄົ້ນຄວ້າທາງດ້ານວິທະຍາສາດຂອງຂ້າພະເຈົ້າຊຶ່ງມີຄວາມສຳຄັນຫຼາຍສຳລັບ ວຽກຂອງຂ້າພະເຈົ້າ." ເມື່ອເວົ້າເຖິງປະສົບການ ໃນການເຮັດວຽກຮ່ວມກັບ ຄະນະພາກວິຊາຂອງອາເມລິກາ, ເພິ່ນ ໄດ້ກ່າວວ່າ, "ການເຮັດວຽກຮ່ວມກັບທີ່ປຶກສາຕ່າງປະເທດ ເຮັດໃຫ້ພວກເຮົາສາມາດຮັບຮູ້ແນວຄວາມຄິດທາງດ້ານ ວິທະຍາສາດ ແລະ ວິຊາການຫຼາຍຂຶ້ນ. ນອກຈາກນັ້ນ, ບັນດາທີ່ປຶກສາ ຍັງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ, ພາສາ, ຂໍ້ສະເໜີ ແລະ ຄຳຄິດເຫັນ ເພື່ອຊຸກຍູ້ໃຫ້ພວກເຮົານຳໃຊ້ມາດຕະຖານການເຮັດວຽກດ້ານວິທະຍາສາດຂອງສາກົນ." ໃນຖານະທີ່ເປັນສ່ວນໜຶ່ງຂອງແຜນງານການ ໃຫ້ທຶນໃນການຄົ້ນຄວ້າຂະໜາດນ້ອຍ, ແຕ່ລະທີມຕ້ອງໄດ້ສຳເລັດການສຶກສາບັນດາບົດຮຽນທີ່ທາງໂຄງການ ANRCB ໄດ້ພັດທະນາ ຂຶ້ນດ້ວຍຕົນເອງ. ເມື່ອຖາມກ່ຽວກັບການທົບທວນການຮຽນ ຮູ້ດ້ວຍຕົນເອງ, ທ່ານ ນາງ ດຣ. ສຸກສາໝອນ ກ່າວວ່າ "ຄວາມຈິງແລ້ວ ທຸກບົດຮຽນທີ່ພວກເຮົາໄດ້ຮຽນ ແມ່ນດີ ແລະ ມີປະໂຫຍດຫຼາຍ, ສຳລັບຂ້າພະເຈົ້າແລ້ວແມ່ນມັກບົດຮຽນກ່ຽວກັບ ການຄົ້ນຄວ້າທາງ ດ້ານໂພຊະນາການຫຼາຍທີ່ສຸດ ເພາະມັນອະທິບາຍການອອກແບບ ການຄົ້ນຄວ້າທາງດ້ານວິທະຍາສາດຢ່າງກວ້າງຂວາງ." ທ່ານ ນາງ ດຣ. ສຸກສາໝອນ ໄດ້ມີແນວຄວາມຄິດກ່ຽວກັບໂຄງການຕໍ່ໄປ ແລະ ມີຄວາມມຸ້ງຫວັງສູງສຳລັບການສຶກສາຂອງເພິ່ນ. "ໃນອານາຄົດ ຂ້າພະເຈົ້າຫວັງວ່າ ບົດຄົ້ນຄວ້າຂອງຂ້າພະເຈົ້າຈະສາມາດຊ່ວຍອອກແບບບັນດາມາດຕະການ ເພື່ອຊ່ວຍໃຫ້ຜູ້ດູແລເດັກ ປະຕິບັດຕາມແນວທາງໃນການໃຫ້ອາຫານ ເດັກຢ່າງເໝາະສົມ."

## ສົນໃຈ ການອອກແບບ & ວິທີການ ຄົ້ນຄວ້າບໍ່?

ສະຖາບັນ ສຸຂະພາບແຫ່ງຊາດ (ສະຫະລັດອາເມລິກາ) ເປັນເຈົ້າພາບໃນການຮຽນຮູ້ໂດຍບໍ່ໄດ້ເສຍຄ່າສຳລັບນັກຄົ້ນຄວ້າຢ່າງກວ້າງຂວາງ. ແຫຼ່ງໜຶ່ງ ແມ່ນການສຳມະນາທາງອອນລາຍ **Mind the Gap Webinar** ຂອງຫ້ອງການປ້ອງກັນພະຍາດ ທີ່ໄດ້ຈັດມາເປັນເວລາດົນນານມາແລ້ວ. ການສຳມະນາສ່ວນໃຫຍ່ຈັດຂຶ້ນໃນຮູບແບບບັນລະຍາຍບົດນຳສະເໜີໂດຍບໍ່ເສຍຄ່າ ແລະ ໃຊ້ເວລາຫນຶ່ງຊົ່ວໂມງ ບັນຍາຍກ່ຽວກັບການອອກແບບການຄົ້ນຄວ້າ, ການວັດແທກ, ມາດຕະການ, ການວິເຄາະຂໍ້ມູນ, ແລະ ວິທີການອື່ນໆທີ່ນ່າສົນໃຈທາງດ້ານວິທະຍາສາດໃນການປ້ອງກັນ. ການບັນຍາຍໄດ້ຖືກບັນທຶກເພື່ອເບິ່ງໃນພາຍຫຼັງຢູ່ໃນຊ່ອງ YouTube ແລະ ທ່ານສາມາດດາວໂຫລດບົດນຳສະເໜີ, ເອກະສານອ້າງອີງ, ຄຳຖາມ ແລະ ຄຳຕອບຢູ່ໃນເວັບໄຊທ໌ຂອງ HIH.

https://www.prevention.nih.gov/education-training/methods-mind-gap

ບາງຕົວຢ່າງຂອງການສຳມະນາຜ່ານມາ:

- ເມື່ອໃດການສຶກສາແບບກ້າວກະໂດດ (Stepped Wedge) ຈຶ່ງເປັນທາງເລືອກທີ່ດີ ສຳລັບການອອກແບບການສຶກສາ? - https://www.prevention.nih.gov/education-training/methods-mind-gap/when-stepped-wedge-study-good-study-design-choice
- ການເຜີຍແຜ່ ແລະ ການຈັດຕັ້ງປະຕິບັດການຄົ້ນຄວ້າ: ສິ່ງທ້າທາຍ ແລະ ໂອກາດ - https://www.prevention.nih.gov/education-training/methods-mind-gap/design-and-analysis-studies-evaluate-multilevel-interventions-public-health-and-medicine
- ການມີສ່ວນຮ່ວມ ໃນການຄົ້ນຄວ້າເຊີງຄຸນນະພາບ: ໂອກາດໃນການປ້ອງກັນ ແລະ ການສົ່ງເສີມສຸຂະພາບ - https://www.prevention.nih.gov/education-training/methods-mind-gap/engaging-qualitative-research-methods-opportunities-prevention-and-health-promotion

## ສຳມະນາ: **ຄວາມເຂົ້າໃຈຮູບແບບຄວາມຫຼາກຫຼາຍຂອງອາຫານ ໃນປະເທດ ເນປານ**

**5 ຕຸລາ 2022 ► 9:00-10:00 ໂດຍທາງ Zoom**



ຄວາມຫຼາກຫຼາຍຂອງອາຫານແມ່ນມີຄວາມສຳຄັນຕໍ່ກັບຜົນໄດ້ຮັບທາງດ້ານໂພຊະນາການ. ການສຳມະນາໃນເທື່ອນີ້ ທ່ານ ສາດສະດາຈານ Gerald Shively ຂອງມະຫາວິທະຍາໄລ Purdue (ສະຫະລັດອະເມລິກາ) ຈະໄດ້ມາອະທິບາຍສິ່ງທີ່ໄດ້ຮຽນຮູ້ກ່ຽວກັບອາຫານຂອງຄົວເຮືອນຢູ່ ໃນປະເທດ ເນປານ. ຈາກຜົນຂອງການສຳຫຼວດປະຈຳປີ ໃນ 3 ຮອບ ຂອງ ຈຳນວນ 11,820 ຄົວເຮືອນ ທີ່ຢູ່ໃນ ຕົວເມືອງ ແລະ ຊົນນະບົດ ຂອງປະເທດ ເນປານ. ການສຳມະນາຄັ້ງນີ້ຈະດຳເນີນເປັນພາສາອັງກິດ ແລະ ມີການແປເປັນພາສາລາວທ່ານຈະມີໂອກາດໃນການສອບຖາມ ຄຳຖາມ.

**ລິງທະບຽນ→**

# ແຫຼ່ງຂໍ້ມູນແຫ່ງຊາດທາງ ດ້ານໂພຊະນາການ

**ທ່ານເຄີຍເຫັນຂໍ້ມູນຂອງ NIPN ບໍ່?**

**https://nipn.lsb.gov.la**

ບ່ອນເກັບກໍາຂໍ້ມູນຂອງ NIPN, ທ່ານສາມາດຊອກຫາຂໍ້ມູນລ່າສຸດທີ່ເປັນທາງການກ່ຽວກັບຕົວຊີ້ວັດສໍາຄັນສໍາລັບໂພຊະນາການໂດຍອີງຕາມບັນດາຂະແໜງການຕ່າງໆ, ເວລາ, ແລະ ພູມສັນຖານໃນເວັບໄຊສ. ທ່ານສາມາດສ້າງຕາຕະລາງຂໍ້ມູນທີ່ ສົ່ງອອກເປັນ Excel ແລະ ສ້າງເປັນຂໍ້ມູນສະຖິຕິ ໄດ້ງ່າຍ ແລະ ໄວເຊັ່ນດຽວກັນ.




ໂຄງການ NIPN ບໍ່ພຽງແຕ່ເປັນບ່ອນເກັບຂໍ້ມູນແຕ່ຍັງເປັນໄດ້ຫຼາຍກວ່ານັ້ນ. ຈຸດປະສົງແມ່ນເພື່ອສ້າງຂີດຄວາມສາມາດຂອງສະຖາບັນໃນການຄຸ້ມຄອງ ແລະ ວິເຄາະຂໍ້ມູນໂພຊະນາການຈາກຫຼາຍຂະແໜງການ ເພື່ອຕິດຕາມຄວາມຄືບໜ້າ ແລະ ການລົງທຶນໃສ່ດ້ານໂພຊະນາການ ຢູ່ພາຍໃນປະເທດ.

NIPN ປະສານກັບຫຼາຍພາກສ່ວນໃຫ້ເຂົ້າຫາກັນ ເຊັ່ນ: ສູນໂພຊະນາການ ແລະ ຫ້ອງການສະຖິຕິ, ສະຖານບັນຄົ້ນຄວ້າການພັດທະນາຂອງລາວ ພາຍໃຕ້ ກະຊວງແຜນການ ແລະ ການລົງທຶນ, ສະຖາບັນຄົ້ນ ຄ້ວາເສດຖະກິດ ແລະ ນະໂຍບາຍເສດຖະກິດສັງຄົມ ຂອງສະຖາບັນວິທະຍາສາດສັງຄົມຂອງລາວ ແລະ ສູນສະຖິຕິພາຍໃຕ້ ກະຊວງສາທາລະນະສຸກ, ກະຊວງສຶກສາ ແລະ ກິລາ ແລະ ກະຊວງກະສິກໍາ ແລະ ປ່າໄມ້.

# ຂ່າວຈາກຜູ້ຈັດຕັ້ງປະຕິບັດ

**ເຄື່ອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອສົ່ງເສີມໂພຊະນາການ (SUN CSA) ແມ່ນເຄືອຂ່າຍຂອງບັນດາອົງການ INGOs ແລະ ອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກຮ່ວມກັນ ເພື່ອປັບປຸງໂພຊະນາການຢູ່ ສປປ ລາວ.**

ເວັບໄຊສຂອງ SUN CSA ມີສອງພາສາ ແລະ ເປັນຫ້ອງສະມຸດທາງດ້ານໂພຊະນາການ ຊຶ່ງປະກອບມີບົດລາຍງານ, ນະໂຍບາຍ, ແລະ ເອກະສານການຝຶກ ອົບຮົມ. ໃນສ່ວນຂອງວິດີໂອປະກອບມີຂໍ້ມູນຂອງໂຄງການໂພຊະນາການໃນທົ່ວປະເທດ ແລະ ວິດີໂອການ ສິດສອນ ທີ່ເປັນພາສາລາວ ແລະ ພາສາຊົນເຜົ່າ. ທ່ານສາມາດເຂົ້າເບິ່ງຫ້ອງສະມຸດແບບ ເຕັມໆ ໄດ້ທີ່: https://suncsalaos.org ຫຼື ເຂົ້າໄປໃນ ຊ່ອງ YouTube ເພື່ອເບິ່ງວິດີໂອທັງໝົດ ໄດ້ທີ່: https://www.youtube.com/channel/UC7ZT8js2X1Z2RtmpAC5HzTw/videos



ອີກວິທີການໜຶ່ງ ທີ່ຈະໄດ້ຮູ້ກ່ຽວກັບການລິເລີ່ມໂຄງການ ໃໝ່ຫຼືຫົວຂໍ້ທີ່ໄດ້ຮັບການກ່າວເຖິງຫຼາຍສໍາລັບຊຸມຊົນໂພຊະນາ ການ ຢູ່ໃນ ສປປ ລາວ ແມ່ນ SUNCSA’s **Hangout Series**! ການປະຊຸມແບບບໍ່ເປັນທາງການ ດໍາເນີນເປັນພາສາ ລາວ ໃຊ້ເວລາໜຶ່ງຊົ່ວໂມງຈັດຂຶ້ນ ໃນວັນສຸກຕອນເຊົ້າ ແລະ ສາມາດເບິ່ງໄດ້ພາຍຫຼັງ ທີ່ເວັບໄຊສຂອງ SUN CSA. ບົດນໍາສະເໜີປະຈຸບັນ ປະກອບມີ

- ການແນະນໍາ ການປັບຕົວທາງດ້ານເຕັກໂນໂລຊີທີ່ ເໝາະສົມໃນການປູກເຂົ້າເພື່ອປັບປຸງການ ຄໍ້າປະກັນສະບຽງອາຫານ
- ການພັດທະນາຊ່ຽວຊານ ທີ່ປຶກສາດ້ານການລ້ຽງລູກດ້ວຍນົມແມ່ ຊຸດທໍາອິດຢູ່ ສປປ ລາວ
- ການສ້າງຄວາມຮັບຜິດຊອບຮ່ວມກັນ ລະຫວ່າງໂຮງໝໍນ້ອຍ ແລະ ຊຸມຊົນ ໃນການໃຫ້ບໍລິການທາງດ້ານສຸຂະພາບ

**ສອບຖາມຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ / For more information please contact:**

ສາມາດຕິດຕໍ່ກັບໂຄງການພວກເຮົາໄດ້ທີ່ ສູນໂພຊະນາການ, ຊັ້ນ 2, ບ້ານຊຽງດາ ເມືອງໄຊເສດຖາ ນະຄອນຫລວງວຽງຈັນ

ພາກສ່ວນທີ່ກ່ຽວຂ້ອງກັບວຽກງານໂພຊະນາການ ແມ່ນສາມາດນໍາໃຊ້ສະຖານທີ່ອົບຮົມ LANI ໄດ້. ກະລຸນາຕິດຕໍ່ທີ່ ANRCB@crs.org

Location: Center of Nutrition, 2nd floor, Xiengda Village, Saysettha District, Vientiane Capital, Lao PDR.
The LANI training space is available for use by nutrition stakeholders. Please contact ANRCB@crs.org.